ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------000----------

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

4920----

ເລກທີ.........../ຫກ.ມຍ

ນະຄອນຫຼວງວຽງຈັນ, ວັນທີ 16 DEC 2016

# ໜັງສືແຈ້ງການ

ຮຽນ: ທ່ານຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ

ເລື່ອງ: ເກັບກຳຈຳນວນໂຮງຮຽນທີ່ມີຫ້ອງຄອມພິວເຕີ ແລະ ຫ້ອງການນຳໃຊ້ເຄື່ອງທົດລອງວິທະຍາສາດ

- ອີງຕາມ: ຄຳເຫັນຂອງທ່ານຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ລົງວັນທີ 7 ທັນວາ 2016
- ອີງຕາມ: ການສະເໜີຂອງກົມມັດທະຍົມສຶກສາ

ຫ້ອງການກະຊວງສຶກສາທິການ ແລະ ກິລາ ຮຽນສະເໜີມາຍັງທ່ານຊາບວ່າ: ກົມມັດທະຍົມສຶກສາມີຄວາມຕ້ອງການຂໍ້ມູນເພື່ອປະກອບເຂົ້າໃນການສ້າງແຜນງົບປະມານເພື່ອສະເໜີຂໍທຶນຈັດຊື້ເຄື່ອງຄອມພິວເຕີ, ເຄື່ອງທົດລອງວິທະຍາສາດ, ຫ້ອງທົດລອງ ແລະ ຫ້ອງເຝິກປະຕິບັດຕົວຈິງໃຫ້ແກ່ໂຮງຮຽນມັດທະຍົມທົ່ວປະເທດ ດັ່ງນັ້ນ, ຈຶ່ງມອບໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ສັງລວມໂຮງຮຽນທີ່ມີຫ້ອງຮຽນຄອມພິວເຕີແລ້ວ, ຫ້ອງທົດລອງວິທະຍາສາດ (ຊີວະວິທະຍາ, ເຄມີສາດ, ຟີຊິກສາດ) ທີ່ສາມາດຈັດການຮຽນ-ການສອນ ຜ່ານມາແລ້ວ ແລະ ຈຳນວນໂຮງຮຽນທີ່ບໍ່ທັນມີຫ້ອງຮຽນຄອມພິວເຕີ ແລະ ຫ້ອງທົດລອງວິທະຍາສາດດັ່ງກ່າວພາຍໃນແຂວງຂອງທ່ານ ແລ້ວລາຍງານໃຫ້ກົມມັດທະຍົມສຶກສາ ກະຊວງສຶກສາທິການ ແລະ ກິລາ ບໍ່ໃຫ້ກາຍ 20/01/2017. (ລາຍລະອຽດແມ່ນມີແບບຟອມຕິດຂັດມາພ້ອມນີ້)

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເຫັນສົມຄວນດ້ວຍ.

ລ.ທ. ຫົວໜ້າຫ້ອງການ.

ກະຊວງສຶກສາທິການ ແລະ ກິລາ ຫ້ອງການ

ວິໄລ ພອນແກ້ວ

ໝາຍເຫດ: ເບີໂທຕິດຕໍ່22492464 (ອຈ ໄຊຍະເດດ)